ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***************

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ເລກທີ: 0449/ສຄອຊ

ນະຄອນຫຼວງວຽງຈັນ, ວັນທີ 30 APR 2021

**ບົດລາຍງານ**

**ຕໍ່ຄະນະສະເພາະກິດ 32/ນຍ ຄັ້ງວັນທີ 28/04/2021**

**ຮຽນ: ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທີ່ນັບຖື.**

**ເລື່ອງ: ບົດລາຍງານ ການຕິດຕາມຜົນກະທົບແລະ ຜົນຂະຫຍາຍນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບການລະບາດຂອງພະຍາດ Covid-19 ຂອງ ພາກທຸລະກິດ ໃນກອງປະຊຸມທາງໄກ ຄັ້ງວັນທີ 28 ເມສາ 2021.**

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານການແຜ່ລະບາດຂອງພະບາດ Covid-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ຂໍຖືເປັນກຽດລາຍງານ ການຕິດຕາມຜົນກະທົບແລະ ຜົນຂະຫຍາຍນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບການລະບາດຂອງພະຍາດ Covid-19 ຮອບໃໝ່ຂອງ ພາກທຸລະກິດ ດັ່ງນີ້:

- ສຄອຊ ໄດ້ສືບຕໍ່ ປັບປຸງການເຮັດວຽກຂອງ ຄະນະສະເພາະກິດ Covid-19 ຂອງ ສຄອຊ ທີ່ໄດ້ຈັດຕັ້ງຂຶ້ນໃນເດືອນ ມີນາ ປີ 2020 ຄືນໃໝ່ ໃຫ້ສາມາດເຮັດໜ້າທີ່ໄດ້ຄືເກົ່າ ແລະ ໄດ້ ປັບປຸງໃນການຈັດຕັ້ງຂອງ ສະພາການຄ້າ ແລະ ອຸດສາຫະກຳຂອງແຂວງ (ສຄອ ແຂວງ) 17 ແຂວງໃນຂອບເຂດທົ່ວປະເທດ ຈຶ່ງ ເຮັດໃຫ້ ສຄອຊ ໄດ້ຮັບການລາຍງານສະພາບການ ແລະ ຂໍ້ສະເໜີຈາກທຸລະກິດທ້ອງຖິ່ນ ຢ່າງທົ່ວເຖິງ. ໃນວັນທີ 27/04/2021 ໄດ້ມີກອງປະຊຸມທາງໄກຮ່ວມກັບ ສຄອ ແຂວງ, ຈາກ 17 ແຂວງ ກ່ຽວກັບສະພາບຂໍ້ຫຍຸ້ງຍາກຫຼັງຈາກການປະກາດໃຊ້ຄຳສັ່ງເລກທີ່ 15/ນຍ. ຄະນະພວກເຮົາໄດ້ສັງລວມສະພາບການຈຳນວນໜຶ່ງທີ່ເກີດຂຶ້ນໃນແຕ່ລະແຂວງ ທີ່ຂໍລາຍງານ ບາງເນື້ອໃນ ຕໍ່ກອງປະຊຸມໃນຄັ້ງນີ້ດັ່ງຕໍ່ໄປນີ້:
- ແຕ່ລະແຂວງ ແລະ ເມືອງ ໄດ້ຈັດຕັ້ງຈຸດກວດກາຕາມເສັ້ນທາງ ຕາມຊາຍແດນ ທີ່ຕິດກັບ ແຂວງ ຕໍ່ແຂວງ, ເມືອງຕໍ່ ເມືອງອື່ນ. ໃນຫຼາຍແຂວງ ໄດ້ຮຽກຮ້ອງໃຫ້ ຄົນຂັບລົດຂົນສົ່ງສິນຄ້າ ມີໃບຢັ້ງຢືນກາດກວດໂຄວິດ



สแกนด้วย CamScanner

ຈາກແຂວງທີ່ ທຸລະກິດໄດ້ຈົດທະບຽນ ຈຶ່ງສາມາດຂົນຂໍລິດຂົນສົ່ງສິນຄ້າແຜນແດນ ແຂວງ ຫຼື ເມືອງໄດ້. ມາດຕະການນີ້ ສຄອ ແຂວງ ສະໜັບສະໜູນ ແຕ່ຈະຕ້ອງໄດ້ແກ້ໄຂ. ຜູ້ປະກອບການຂົນສົ່ງ ໂດຍສະເພາະທີ່ຂົນສົ່ງຜົນຜະລິດກະສິກຳ ລວມແລ້ວ (80-90%) ເປັນຜູ້ປະກອບການລາຍນ້ອຍ (SME) ເຂົາເຈົ້າບໍ່ຢາກສ່ຽງ ແລະ ບໍ່ໄດ້ຮັບຂໍ້ມູນພຽງພໍ ກ່ຽວກັບບັນດາມາດຕະການ ແລະ ເອກະສານຕ່າງໆ ເພື່ອໃຫ້ເຂົາເຈົ້າ ສາມາດຂົນລົດຂົນສົ່ງຂອງຕົນເອງ ນຳສົ່ງສິນຄ້າ, ຜະລິດຕະພັນກະສິກຳ ຂ້າມເຂດແດນຂອງເມືອງ ຫຼື ແຂວງຂອງຕົນເອງ. ຕໍ່ເຫດການນີ້ ສຄອຊ-ສຄອ ແຂວງ ຈຶ່ງສະເໜີໃຫ້ອຳນາດການປົກຄອງເມືອງ ແລະ ແຂວງ ໃຫ້ລະດົມບັນດາຜູ້ປະກອບການຂົນສົ່ງດັ່ງກ່າວໄປກວດເຊື້ອໂຄວິດໃນສະຖານທີ່ທີ່ຈັດໄວ້ ແລ້ວອອກໃບຢັ້ງຢືນໃຫ້ເຂົາເຈົ້າໄດ້ຢ່າງທັນການ. ນອກຈາກນັ້ນ ຈະຕ້ອງໄດ້ເຜີຍແຜ່ຂ່ອນສານໃຫ້ພວກກ່ຽວຮູ້ຜ່ານສື່ທາງການ ແລະ ການແຈ້ງເຖິງກຸ່ມບ້ານ. ການລະດົມນີ້ ຈະສົ່ງເສີມໃຫ້ແກ່ການຈໍລະຈອນສິນຄ້າພາຍໃນ ແລະ ການເກັບກູ້ ແລະ ຂົນສົ່ງຜົນລະປູກກະສິກຳໄປສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດໄດ້ທັນການ.

- **ເງື່ອນໄຂ ແລະ ມາດຖານຂອງຄົນຂັບລົດຕ່າງປະເທດທີ່ເຂົ້າ ສປປ ລາວ** ແມ່ນໄດ້ວາງໄວ້ລະອຽດ ແລະ ມີການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແຕ່ຍັງມີລົດຂົນສົ່ງຈຳນວນຫຼວງຫຼາຍ ທີ່ບໍ່ສາມາດເຂົ້າມາໄດ້ ຍ້ອນການຮັບຮູ້ໃບຢັ້ງຢືນການກວດພະຍາດໂຄວິດ ຂອງເຈົ້າໜ້າທີ່ ແມ່ນຮັບຮູ້ແຕ່ຂອງສະຖາບັນຂອງລັດຂອງປະເທດທີ່ກ່ຽວຂ້ອງ, ສ່ວນຂອງສະຖາບັນເອກະຊົນແມ່ນບໍ່ໄດ້ມີການຮັບຮູ້. ເພື່ອໃຫ້ການຈໍລະຈອນສິນຄ້າຜ່ານແດນໄດ້ເປັນປົກກະຕິໃນໄລຍະລັອກດາວ (Lock down) ສະເໜີໃຫ້ເຈົ້າໜ້າທີ່ ທີ່ຮັບຜິດຊອບໄດ້ເປີດກ້ວາງການຮັບຮູ້ໃບຢັ້ງຢືນການກວດພະຍາດໂຄວິດຈາກສະຖາບັນອື່ນໆ ທີ່ມີມາດຖານຄົບຖ້ວນດ້ວຍ.
- ສຄອ ແຂວງໃນພາກເໜືອໄດ້ລາຍງານວ່າ ມີຫຼາຍ ບ້ານ ໃນຫຼາຍ ເມືອງ ບໍ່ໃຫ້ຊາວບ້ານ ອອກຈາກເຂດບ້ານຂອງຕົນເອງ ໃນໄລຍະລັອກດາວ ຈຶ່ງເຮັດໃຫ້ຜູ້ປະກອບການທີ່ເກັບກູ້ຜົນລະປູກເພື່ອສົ່ງໄປ ສປ ຈີນ ຂາດແຮງງານ ເຊິ່ງ ປັດຈຸບັນໃນປັດຈຸບັນເປັນເວລາເກັບກູ້ໝາກຖົ່ວຂົນ. ສຄອ ແຂວງ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ຊອກຫາວິທີຊ່ວຍ ໃຫ້ຊາວບ້ານທີ່ເປັນຜູ້ອອກແຮງງານເກັບກູ້ຜົນລະປູກກະສິກຳໃຫ້ອອກໄປເຮັດວຽກໄດ້.
- ຢູ່ດ່ານບໍ່ເຕັນ ເນື່ອງຈາກວ່າມີພະນັກງານແລ່ນເອກະສານນຳສິນຄ້າສົ່ງອອກຈຳນວນໜຶ່ງ ໄດ້ຕິດພະຍາດໂຄວິດ. ເຈົ້າໜ້າທີ່ພາສີຢູ່ດ່ານໄດ້ອານຸຍາດໃຫ້ແຕ່ 2 ບໍລິສັດຊິບປິ້ງເປັນຜູ້ແລ່ນເອກສານ ໄດ້ສ້າງຄວາມຫຍຸ້ງຍາກ ແລະ ແກ່ຍາວການປະກອບເອກະສານເພື່ອສົ່ງອອກ. ສຄອ ແຂວງ ສະເໜີໃຫ້ມີການເປີດກ້ວາງໃຫ້ບໍລິສັດອີກຈຳນວນໜຶ່ງຕື່ມ ເພື່ອເລັ່ງລັດລະບົບການປະກອບເອກະສານໃນດ່ານບໍ່ເຕັນ.

ທີ່ກ່າວມານີ້ ເປັນພຽງເຫດການຈຳນວນໜຶ່ງທີ່ໄດ້ຮັບການລາຍງານ ແລະ ມັນຍັງຈະມີຫຼາຍເຫດການຕື່ມອີກ.

ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຄັ້ງທີ 2 ນີ້. ໂດຍອີງຕາມກອງປະຊຸມທາງໄກຂອງຄະນະປະຈຳ ແລະ ຄະນະສະເພາະກິດໂຄວິດ-19 ຂອງ ສຄອຊ ຄັ້ງວັນທີ 24/04/2021. ຄະນະພວກເຮົາໄດ້ຮັບຮູ້ເຖິງສະພາບການອັນຮ້າຍແຮງກວ່າເກົ່າ ຂອງການລະບາດຂອງພະຍາດ ແລະ ບໍ່ຮູ້ວ່າຈະຈຳກັດໄດ້ເມື່ອໃດ ພ້ອມທັງບໍ່ຮູ້ວ່າການລັອກດາວຈະຖືກຍົກເລີກໃນເມື່ອໃດ?.

ໃນປັດຈຸບັນສະພາບຂອງພາກທຸລະກິດໃນເກືອບທຸກໆຂະແໜງການແມ່ນ ຍັງອ່ອນເພຍຈາກການກະທົບຂອງການລະບາດຂອງພະຍາດໂຄວິດ-19 ໃນໜຶ່ງປີທີ່ຜ່ານມາ. ມີຫຼາຍ ວິສາຫະກິດ ແມ່ນເຄື່ອນໄຫວບໍ່ໄດ້ເຕັມອັດຕາ, ມີຫຼາຍວິ



สแกนด้วย CamScanner

ສາຫະກິດ ຍັງບໍ່ໄດ້ຟື້ນຕົວຕໍ່ສະພາບຄ່ອງດ້ານການເງິນ ແລະ ຍັງມີຫຼາຍວິສາຫະກິດ ຍັງໄດ້ປິດກິດຈະການຂອງຕົນ ໂດຍສະເພາະໃນຂະແໜງທຸລະກິດທ່ອງທ່ຽວ ແລະ ການບໍລິການປື້ນອ້ອມການທ່ອງທ່ຽວ. ເພື່ອຕອບໂຕ້ກັບວິກິດການຄັ້ງທີໜຶ່ງ ວິສາຫະກິດໂດຍສະເພາະທຸລະກິດຂະໜາດນ້ອຍ ຂະໜາດກາງ (SME) ໄດ້ກູ້ຢືມເງິນ ແລະ ນຳໃຊ້ເງິນສະສົມຂອງເຂົາເຈົ້າເພື່ອປະຄອງທຸລະກິດໃນຕະຫຼາດອຸປະໂພກບໍລິໂພກ ທີ່ໄດ້ຈຳກັດລົງ ລາຍຮັບກໍ່ບໍ່ສາມາດກຸ້ມຕົນເອງໄດ້ເປັນສ່ວນໃຫຍ່. ສະພາບການລ໋ອກດາວຄັ້ງທີ 2 ນີ້ເຮັດໃຫ້ເຂົາເຈົ້າມີຄວາມກັງວົນຫຼາຍຕໍ່ອານາຄົດຂອງທຸລະກິດ ໂດຍສະເພາະລ໋ອກດາວແມ່ນໄດ້ປິດຕະຫຼາດຂາເຂົ້າ ແລະ ຕະຫຼາດຂາອອກ, ໝາຍເຖິງການປິດລາຍຮັບຂອງເຂົາເຈົ້າຢ່າງບໍ່ຮູ້ກຳນົດອັນແນ່ນອນ. ຈະຢືມເງິນຈາກທະນາຄານ ຫຼື ກັບສະຖາບັນການເງິນຈຸລະພາກອີກແມ່ນມີຄວາມສ່ຽງສູງ ເນື່ອງຈາກວ່າໜີ້ເກົ່າຍັງບໍ່ທັນຊຳລະ ໝົດເທື່ອ ພ້ອມທັງບັນດາທະນາຄານທຸລະກິດຈະວາງເງື່ອນໄຂສູງໃນການໃຫ້ກູ້ຕື່ມ ຫຼື ຈະບໍ່ໃຫ້ກູ້ຕື່ມ ເພື່ອບໍ່ໃຫ້ກາຍເປັນໜີ້ຊຳລະບໍ່ໄດ້. ຮ້າຍໄປກວ່ານັ້ນສັງຄົມຜູ້ອຸປະໂພກບໍລິໂພກ (Consumption Society) ໃນ ສປປ ລາວ ທີ່ຖືກກະທົບຈາກການລະບາດຂອງພະຍາດຄັ້ງທີ 1 ແລ້ວແມ່ນຈະຖືກກະທົບໄປອີກຕື່ມເນື່ອງຈາກລາຍຮັບທຸລະກິດຫຼຸດລົງ ເຮັດໃຫ້ລາຍຮັບຂອງບຸກຄົນຫຼຸດລົງ ຫຼື ຂາດລາຍຮັບ ເຮັດໃຫ້ກຳລັງຊື້ໃນສັງຄົມຫຼຸດລົງ. ເຖິງວ່າພວກເຮົາສົ່ງເສີມການຜະລິດພາຍໃນຫຼາຍກໍ່ແມ່ນ ແຕ່ຈະບໍ່ມີຜູ້ຊື້. ພ້ອມໄປກັນນັ້ນ ລາຍຮັບຂອງລັດທີ່ມາຈາກການເກັບພາສີອາກອນ ແລະ ຄ່າທຳນຽມ ແມ່ນຈະຫຼຸດລົງໄປຕາມໆກັນ. ນີ້ເປັນເຫດການທີ່ໜ້າວິຕົກ ທີ່ຄະນະພວກເຮົາຈະຕ້ອງໄດ້ເອົາໃຈໃສ່.

ຕໍ່ສະພາບການເຄັ່ງຮ້ອນດັ່ງກ່າວ ສຄອຊ ຍັງຢືນຢັນຕໍ່ຂໍ້ສະເໜີຂອງ ສຄອຊ ກ່ຽວກັບມາດຕະການ ແລະ ນະໂຍບາຍເພື່ອຫຼຸດຜ່ອນຜົນກະທົບ ແລະ ຟື້ນຟູເສດຖະກິດຈາກວິກິດການໂຄວິດ-19 ທີ່ໄດ້ສະເໜີໃນບົດລາຍງານເລກທີ່ 392/ສຄອຊ ລົງວັນທີ 10/05/2020 ທີ່ປະກອບມີ 8 ຫົວຂໍ້ໃຫ້ລັດຖະບານໄດ້ພິຈາລະນາ ເຊິ່ງມາເຖິງປັດຈຸບັນມີຫົວຂໍ້ຈຳນວນໜຶ່ງທີ່ໄດ້ຮັບພິຈາລະນາ ແລະ ມີການຈັດຕັ້ງປະຕິບັດໄປໄດ້ດີ ແຕ່ມີຫຼາຍຫົວຂໍ້ຍັງບໍ່ທັນໄດ້ມີການພິຈາລະນາແກ້ໄຂທີ່ທາງຄະນະປະຈຳ ແລະ ຄະນະສະເພາະກິດຂອງ ສຄອຊ ມີຄວາມມຸ້ງຫວັງວ່າລັດຖະບານຈະໄດ້ນຳເອົາການສະເໜີໄປພິຈາລະນາອີກຕື່ມຕາມສະພາບຄວາມເປັນຈິງ ແລະ ຄວາມຮຽກຮ້ອງຕ້ອງການຂອງວິກິດການໂຄວິດ-19 ຄັ້ງທີ 2 ນີ້. ຄະນະຂອງພວກເຮົາຂໍເນັ້ນບາງຈຸດດັ່ງຕໍ່ໄປນີ້:

1. ການວາງນະໂຍບາຍ ແລະ ມາດຕະການສະເພາະ ເພື່ອສ້າງໄມ້ງັດເສດຖະກິດ ໃນການຜະລິດຂອງທຸກໆຂະແໜງການ ໃຫ້ຜະລິດຄືນໃໝ່ຢ່າງມີປະສິດທິຜົນດີກວ່າເກົ່າ ຍັງບໍ່ຊັດເຈນ. ການຈັດຫາທຶນໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກປ່ອຍກູ້ໃຫ້ທຸລະກິດ ແມ່ນມາດຕະການໜຶ່ງທີ່ໄດ້ປະຕິບັດ ພ້ອມທັງການຫຼຸດຜ່ອນຄ່ານ້ຳຄ່າໄຟ ແລະ ການແກ່ຍາວການຊຳລະອາກອນ ແລະ ຄ່າປັບໄໝ, ການຫຼຸດຜ່ອນດອກເບ້ຍເງິນກູ້ ແລະ ແກ່ຍາວການຊຳລະສະສາງ. ເປັນມາດຕະການທີ່ຖືກຕ້ອງ ແຕ່ມັນຍັງບໍ່ພຽງພໍ ແລະ ມາດຕະການດັ່ງກ່າວຍັງໄດ້ປະຕິບັດເຂົ້າເຖິງແຕ່ລະທຸລະກິດ ແລະ ນິຕິບຸກຄົນຈຳນວນໜຶ່ງ ແລະ ບໍ່ທົ່ວເຖິງ ຍ້ອນສະພາບຂອງທຸລະກິດໃນ ສປປ ລາວແມ່ນຢູ່ນອກລະບົບເປັນສ່ວນໃຫຍ່. ຄະນະພວກເຮົາເຂົ້າໃຈວ່າລັດຖະບານບໍ່ມີສະພາບຄ່ອງທາງການເງິນ ຊ້ຳພັດຖືກກະທົບຈາກໂຄວິດ-19 ຮອບທີ 1 ເຮັດໃຫ້ມີການຂາດດູນງົບປະມານຕື່ມອີກ.
   - ເຖິງຢ່າງໃດກໍ່ຕາມຄະນະ ສຄອຊ ຢາກໃຫ້ລັດຖະບານຈັດຫາເມັດເງິນຈຳນວນຫຼາຍ ເພື່ອມາກະຕຸ້ນ (Stimulate) ເສດຖະກິດ ເມັດເງິນດັ່ງກ່າວບໍ່ແມ່ນໃຫ້ທຸລະກິດ ແຕ່ແມ່ນໃຫ້ຄົວເຮືອນເພື່ອເພີ່ມກຳລັງຊື້ຂອງ



สแกนด้วย CamScanner

ເຂົາເຈົ້າ ກະຕຸ້ນສັງຄົມຜູ້ບໍລິໂພກ ແລະ ຕະຫຼາດພາຍໃນຂອງພວກເຮົາ. ການສະເໜີຫຼຸດຜ່ອນອາກອນມູນຄ່າເພີ່ມ ຈາກ 10% ມາເປັນ 5% ກໍ່ເປັນການສົ່ງເງິນຄືນໃຫ້ແກ່ຜູ້ບໍລິໂພກ ຈຶ່ງສະເໜີໃຫ້ລັດຖະບານໄດ້ພິຈາລະນາຕື່ມ.

- ການກໍານົດຂະແໜງຜະລິດທີ່ເປັນບູລິມະສິດໃໝ່ ແລະ ການວາງນະໂຍບາຍ ແລະ ມາດຕະການໃໝ່ໃຫ້ແກ່ ຂະແໜງດັ່ງກ່າວ ແມ່ນໃຫ້ມີຄວາມຊັດເຈນກວ່າເກົ່າ. ໂດຍສະເພາະແມ່ນຂະແໜງການທີ່ຈະສ້າງລາຍຮັບທົດແທນ ຂະແໜງການທີ່ບໍ່ສາມາດເຄື່ອນໄຫວໃນໄລຍະການລະບາດຂອງພະຍາດ. ຍົກຕົວຢ່າງ ຂະແໜງກະສິກໍາເພື່ອສົ່ງ ອອກ ແລະ ເພື່ອປ້ອນຕະຫຼາດພາຍໃນ. ຄວນມີໄມ້ງັດເພີ່ມເຕີມໃຫ້ແກ່ຜູ້ປະກອບການທີ່ຢູ່ໃນຂະແໜງການອື່ນມາ ສຸມໃສ່ວຽກງານຜະລິດກະສິກໍາຢ່າງເປັນລະບົບຕາມແຜນພັດທະນາ ແລະ ສັນຍາທີ່ລັດຖະບານໄດ້ເຊັນໄວ້.

2. ນະໂຍບາຍ ແລະ ມາດຕະການໃຫ້ທະນາຄານທຸລະກິດປ່ອຍເງິນກູ້ໃຫ້ SME ຍັງມີຂອດຈໍາກັດຫຼາຍ ແລະ ບໍ່ເຖິງ SME, ຈໍານວນ SME ທີ່ຫຼວງຫຼາຍ ໂດຍສະເພາະຢູ່ຕ່າງແຂວງທີ່ເຄື່ອນໄຫວໃນເຄິ່ງນອກລະບົບ. ຄະນະ ສຄອຊ ສະເໜີໃຫ້ມີການເພີ່ມນະໂຍບາຍ ແລະ ມາດຕະການ ເພື່ອການຄໍ້າປະກັນເງິນກູ້ໃຫ້ແກ່ກຸ່ມ ແລະ ສະຫະກອນ ຜະລິດກະສິກໍາ ແລະ ກຸ່ມ-ສະຫະກອນບໍລິການປົ່ນອ້ອມການຜະລິດກະສິກໍາອື່ນໆ. ຕາມຮູບແບບຂອງ ສຄອຊ ທີ່ໄດ້ທົດລອງນໍາທະນາຄານລາວຝລັ່ງ (BFL) ໃນນະຄອນຫຼວງວຽງຈັນ ໂດຍການສະໜັບສະໜູນຂອງກະຊວງ ການເງິນ ທີ່ໄດ້ຮັບໝາກຜົນ ເພື່ອໃຫ້ໄດ້ຜັນຂະຫຍາຍໄປແຂວງອື່ນ.
3. ນະໂຍບາຍ ແລະ ມາດຕະການດ້ານສະຫວັດດີການສັງຄົມຕໍ່ແຮງງານທີ່ໄດ້ຖືກຢຸດງານໃນໄລຍະການລະບາດຄັ້ງທີ 2 ຕ້ອງໄດ້ມີການກໍານົດໃຫ້ຊັດເຈນຂຶ້ນຕື່ມ. ຄະນະ ສຄອຊ ແມ່ນບໍ່ຢາກໃຫ້ປິດໂຮງງານຕາມລໍາພັງໃຈ ແຕ່ຢາກໃຫ້ ພິຈາລະນາເປັນແຕ່ລະກໍລະນີ ດັ່ງໄດ້ປະຕິບັດໃນໄລຍະການລະບາດຄັ້ງທີ 1.

**ນອກຈາກນັ້ນຄະນະ ສຄອຊ ຢາກຂໍສະເໜີເພີ່ມເຕີມ:**

1) ລັດຖະບານໄດ້ເຄັ່ງຄັດກ່ຽວກັບການເດີທາງຂອງຄົນຕ່າງປະເທດ ຜ່ານບັນດາສະໜາມບິນ ໂດຍໄດ້ຈໍາກັດຖ້ຽວບິນ ມອບເໝົາ (Charters) ລົງ. ໃນປັດຈຸບັນການຟື້ນຟູວິສາຫະກິດ ແລະ ໂຮງງານທີ່ມີຮຸ້ນສ່ວນຕ່າງປະເທດ ຫຼື ເປັນຂອງຄົນລາວເອງ ການໃຫ້ຜູ້ເປັນເຈົ້າຂອງ ແລະ ວິຊາການໄດ້ມາສໍາພັດແທ້ຈິງ ເພື່ອປ່ຽນແປງລະບົບການຄຸ້ມ ຄອງ ແລະ ລະບົບການຜະລິດ. ຈິ່ງສະເໜີໃຫ້ລັດຖະບານເພີ່ມຖ້ຽວບິນມອບເໝົາ ແລະ ອະນຸຍາດ ໃຫ້ເຈົ້າຂອງວິ ສາຫະກິດ, ຜູ້ຊ່ຽວຊານວິຊາການ ໄດ້ເຂົ້າມາ ສປປ ລາວ ງ່າຍຂຶ້ນ ໂດຍປະຕິບັດມາດຕະການປ້ອງກັນໂຄວິດ - 19 ທີ່ວາງອອກ ຢ່າງຮັດກຸມ ແລະ ເຂັ້ມງວດ.
2) ຂໍ້ມູນຂ່າວສານກ່ຽວກັບນະໂຍບາຍ ແລະ ມາດຕະການໂຄວິດ - 19 ແມ່ນກະແຈກກະຈາຍບໍ່ລວມສູນ ແລະ ຍັງບໍ່ ທັນການ, ເຮັດໃຫ້ຂ່າວສານບິດເບືອນໃນສັງຄົມອອນລາຍໄດ້ກະທົບ. ສະເໜີໃຫ້ປັບປຸງລະບົບປະຊາສໍາພັນຕ່າງໆ ໂດຍນໍາໃຊ້ຕາໜ່າງ (Network) ຂອງອົງການຈັດຕັ້ງລັດຕ່າງໆພ້ອມທັງຂອງ ສຄອຊ-ສຄອແຂວງ ເພື່ອເຜີຍແຜ່ຂໍ້ ມູນເປັນອັນດຽວກັບໃຫ້ທັນການ.

ເພື່ອປະກອບເຂົ້າໃນຂະບວນການຕິດຕາມຜົນກະທົບ ແລະ ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການ ເພື່ອ ຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຮອບທີ 2 ນີ້ ຄະນະປະຈໍາ ແລະ ຄະນະສະເພາະກິດຂອງ ສຄອຊ ໄດ້ມີໂຄງການດັ່ງຕໍ່ໄປນີ້:



สแกนด้วย CamScanner

1) ສືບຕໍ່ການຈັດຕັ້ງປະຕິບັດໂຄງການຟື້ນຟູເສດຖະກິດທີ່ໄດ້ເລີ່ມໃນໄລຍະການລະບາດຂອງພະຍາດໂຄວິດ-19 ຮອບທີ 1 ປະກອບມີ:

- ໂຄງການລາວທ່ຽວລາວ ທີ່ຈັດຕັ້ງປະຕິບັດໂດຍຄະນະກຳມາທິການດ້ານການທ່ອງທ່ຽວຂອງ ສຄອຊ ແລະ ໄດ້ຮັບການສະໜັບສະໜູນຈາກພາກເອກະຊົນ ແລະ ໂຄງການພັດທະນາການສຶກສາວິຊາຊີບຂອງກະຊວງສຶກສາ ໃນຮອບຕໍ່ໄປແມ່ນຈະໄດ້ເຮັດວຽກຮ່ວມກັບ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ເພື່ອຈັດປະຕິບັດທີມການນຳທ່ຽວ.

- ໂຄງການສົ່ງເສີມ SME ໃຫ້ເຖິງແຫຼ່ງທຶນທີ່ຈັດຕັ້ງປະຕິບັດ ໂດຍຄະນະກຳມາທິການດ້ານກະສິກຳຂອງ ສອຄຊ ໃນຮອບທີ 2 ນີ້ ແມ່ນເລັງໃສ່ການຜັນຂະຫຍາຍຮູບແບບ ແລະ ກົນໄກລະບົບເງິນກູ້ທີ່ບໍ່ມີຫຼັກຊັບຄໍ້າປະກັນ. ແຕ່ ສຄອຊ ແລະ ສະມາຊິກ ສຄອຊ ຄໍ້າປະກັນໃຫ້ທະນາຄານ. ຮູບແບບຄໍ້າປະກັນເງິນກູ້ໂດຍ ສຄອຊ ແມ່ນໄດ້ເຮັດຮ່ວມກັບ ທະນາຄານລາວຝຣັ່ງ ໂດຍການສະໜັບສະໜູນຂອງ ກະຊວງການເງິນ ທີ່ ເບື້ອງຕົ້ນດຳເນີນຢູ່ນະຄອນຫຼວງວຽງຈັນ.

2) ສ້າງຕັ້ງໂຄງການເພື່ອລະດົມທຶນຈາກພາກທຸລະກິດ ແລະ ບຸກຄົນ ເພື່ອເປັນກອງທຶນຈັດຊື້ຢາວັກຊີນປ້ອງກັນ ໂຄວິດ - 19 ເພື່ອໃຫ້ໄດ້ເປົ້າໝາຍຈຳນວນຜູ້ຊັກວັກຊີນໃນ ສປປ ລາວ ທີ່ກຳນົດໂດຍລັດຖະບານ. ໂຄງການດັ່ງກ່າວແມ່ນມີຈຸດປະສົງໃຫ້ມີວັກຊີນສັກໃຫ້ ພະນັກງານ, ກຳມະກອນ ພ້ອມຄອບຄົວ ແລະ ເຫຼືອໄວ້ສັກໃຫ້ພາກສ່ວນອື່ນ ແລະ ຈະມີກົນໄກການລະດົມທຶນຜ່ານບັນດາ ສຄອ ແຂວງ.

3) ຈັດຕັ້ງປະຕິບັດການສຳຫຼວດຂໍ້ມູນຜົນກະທົບຕໍ່ທຸລະກິດ ແລະ ຕໍ່ແຮງງານຂອງການລະບາດພະຍາດໂຄວິດ-19 ເປັນຄັ້ງທີ 2 ເພື່ອໃຫ້ໄດ້ຂໍ້ມູນມາວິເຄາະ ແລະ ວິໄຈເຖິງຊ່ອງທາງແກ້ໄຂ ແລະ ພັດທະນາໃນແຕ່ລະຂະແໜງການທຸລະກິດ. ການສຳຫຼວດດັ່ງກ່າວຈະນຳໃຊ້ຖານຜູ້ປະສານການທີ່ມີຢູ່ແລ້ວ ແລະ ຈະນຳໃຊ້ພື້ນຖານຂອງ ສຄອ ແຂວງ, ສ່ວນທຶນທີ່ຈະນາໃຊ້ໃນການສາຫຼວດແມ່ນຈະໃຊ້ຂອງ ສຄອຊ ເພື່ອການເລີ່ມຕົ້ນ.

ດັ່ງນັ້ນ ຈຶ່ງສະເໜີລາຍງານໃຫ້ທີ່ປະຊຸມຊາບ ຖ້າມີຄຳຖາມ ຫຼື ຂໍ້ສົງໃສອັນໃດສະເໜີ ໃຫ້ຕິດຕໍ່ຄະນະເລຂາ ສຄອຊ ທີ່ຫ້ອງການ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ປະທານ

ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ
ນະຄອນຫລວງວຽງຈັນ

ອຸເດດ ສຸວັນນະວົງ



สแกนด้วย CamScanner